ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===0000===---

ກະຊວງການເງິນ

ກົມພາສີ

ເລກທີ 1242/ກພສ

ນະຄອນຫຼວງວຽງຈັນ, ວັນທີ 06 APR 2010

# ໜັງສືທາງລັດຖະການ

ເຖິງ: ບັນດາຫົວໜ້າພະແນກອ້ອມຂ້າງກົມພາສີ, ຫົວໜ້າພາສີປະຈຳເຂດ, ຫົວໜ້າດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ.

ເລື່ອງ: ການຂົນສົ່ງສິນຄ້າຜ່ານແດນສາກົນ.

- ອີງຕາມ ກົດໝາຍພາສີ, ສະບັບເລກທີ: 05/ສພຊ, ລົງວັນທີ 20 ພຶດສະພາ 2005.
- ອີງຕາມ ບົດແນະນຳວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ແລະ ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ສະບັບເລກທີ: 0491/ກງ, ລົງວັນທີ: 12 ມີນາ 2009.
- ອີງຕາມ ມະຕິກອງປະຊຸມກ່ຽວກັບວຽກງານພາສີປະຈຳງວດ I ແລະ ທິດທາງແຜນການປະຈຳງວດ II, ສະບັບເລກທີ : 0787/ກພສ, ລົງວັນທີ: 21 ມັງກອນ 2010.
- ອີງຕາມແຈ້ງການຂອງກົມພາສີວ່າດ້ວຍການຈັດຕັ້ງປະຕິບັດການຂົນສົ່ງຜ່ານແດນສາກົນ, ສະບັບເລກທີ : 543/ກພສ, ລົງວັນທີ 8 ມິຖຸນາ 2009.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຜ່ານແດນຂອງອານຸພາກພື້ນລຸ່ມແມ່ນ້ຳຂອງ (GMS-CBTA)

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດລະບຽບການຂົນສົ່ງສິນຄ້າຜ່ານແດນສາກົນ ໃຫ້ໄປຕາມເປົ້າໝາຍ, ຮັບປະກັນໃຫ້ມີຄວາມເຂົ້າໃຈເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ສົ່ງເສີມການອຳນວຍຄວາມສະດວກທາງດ້ານການຄ້າໃຫ້ມີປະສິດທິພາບ.

ກົມພາສີມີໜັງສືທາງລັດຖະການກ່ຽວກັບການຂົນສົ່ງສິນຄ້າຜ່ານແດນສາກົນດັ່ງນີ້:

1. ໃນປະຈຸບັນກົມພາສີ ໄດ້ເຊັນອານຸສັນຍາການຂົນສົ່ງສິນຄ້າຜ່ານແດນສາກົນ ໃນກອບຂອງຂໍ້ຕົກລົງບັນດາປະເທດອານຸພາກພື້ນລຸ່ມແມ່ນ້ຳຂອງ (GMS) ; ເຊິ່ງໃນສັນຍາດັ່ງກ່າວ ໄດ້ກຳນົດເສັ້ນທາງ ເລກ 9 , ຕາມແລວເສດຖະກິດຕະເວັນອອກ-ຕາເວັນຕົກ (EWEC) ; ສະເພາະເສັ້ນທາງ A3 ແມ່ນຈະໄດ້ສືບຕໍ່ຈັດຕັ້ງປະຕິບັດຕາມຮູບແບບດຽວກັນ.

2. ສໍາລັບບັນດາເສັ້ນທາງທີ່ບໍ່ໄດ້ກໍານົດໄວ້ໃນກອບ GMS, ແມ່ນໃຫ້ປະຕິບັດເປັນການນໍາເຂົ້າເພື່ອສົ່ງອອກ ຕາມຂໍ້ຕົກລົງ 0462/ກງ ລົງວັນທີ 14/3/2003.

3. ສິນຄ້າທີ່ຢູ່ໃນລະບອບຂົນສົ່ງຜ່ານແດນສາກົນ ຕ້ອງຫຸ້ມຫໍ່ໃຫ້ໄດ້ຕາມມາດຕະຖານ ຫຼື ຕ້ອງບັນຈຸໃນຕູ້ສິນຄ້າຕາມເງື່ອນໄຂທີ່ກໍານົດໄວ້ ໃນບົດແນະນໍາຂອງລັດຖະມົນຕີວ່າການກະຊວງການເງິນ, ສະບັບເລກທີ: 0491/ກງ, ລົງວັນທີ: 12 ມີນາ 2009;

4. ຫ້າມບໍ່ໃຫ້ບໍລິສັດຂາອອກ-ຂາເຂົ້າ ເຮັດການບໍລິການຂົນສົ່ງສິນຄ້າຜ່ານແດນສາກົນເຖິງແມ່ນວ່າໄດ້ຮັບການມອບສິດຈາກຜູ້ຊື້ກັບຜູ້ຂາຍແລ້ວກໍ່ຕາມ;

5. ຫ້າມບໍ່ໃຫ້ທໍາການຖ່າຍຖ່າຍສິນຄ້າຢູ່ໃນດິນແດນແຫ່ງ ສປປ ລາວ ເກີນໜຶ່ງເທື່ອ, ເວັ້ນເສຍແຕ່ຈະມີການປ່ຽນຫົວລົດລາກ ຫຼື ຫາກເກີດອຸບັດຕິເຫດ ຫຼື ເຫດການເໜືອວິໄສ.

6. ສໍາລັບບັນດາບໍລິສັດທີ່ຈະສາມາດເຮັດການຂົນສົ່ງເປັນຫລາຍເສັ້ນທາງ ກົມພາສີຈະແຈ້ງເປັນອັນສະເພາະ, ສ່ວນສັນຍາທີ່ໄດ້ອະນຸມັດໄປແລ້ວ, ແມ່ນໃຫ້ມີການກວດກາເພື່ອປະຕິບັດໃຫ້ສອດຄ່ອງຕາມບົດແນະນໍາຂອງລັດຖະມົນຕີວ່າການກະຊວງການເງິນ, ສະບັບເລກທີ0491/ກງ, ລົງວັນທີ: 12 ມີນາ 2009;

7. ສ່ວນລາຍລະອຽດກ່ຽວກັບລະບຽບການ, ເງື່ອນໄຂການຂົນສົ່ງສິນຄ້າຜ່ານແດນສາກົນ, ມາດຕະການຕໍ່ຜູ້ດໍາເນີນການບໍລິການຂົນສົ່ງສິນຄ້າຜ່ານສາກົນ, ທາງກົມພາສີຈະອອກແຈ້ງການເພີ່ມເຕີມ ເພື່ອໃຫ້ເຮັດໃຫ້ການຈັດຕັ້ງປະຕິບັດການບໍລິການຂົນສົ່ງສິນຄ້າຜ່ານແດນສາກົນ ໃຫ້ເປັນໄປຕາມລະບຽບການສາກົນ ພ້ອມທັງອໍານວຍຄວາມສະດວກໃຫ້ແກ່ການຄ້າໃນຂົງເຂດພາກພື້ນມີຄວາມວ່ອງໄວ, ງ່າຍດາຍ ແລະ ເປັນເອກະພາບກັບບັນດາປະເທດຄູ່ສັນຍາໃນກອບ (GMS).

ມອບໃຫ້ບັນດາພະແນກອ້ອມຂ້າງກົມພາສີ, ພາສີປະຈໍາເຂດ, ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຖ້າພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ໃຫ້ລາຍງານຂໍທິດຊີ້ນໍາຈາກກົມພາສີໂດຍດ່ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

[illegible] ຫົວໜ້າກົມພາສີ

ບຸນໂຈມ ອຸບົນປະເສີດ